ປະວັຕິພຣະພຸທທະເຈົ້າ



ຮຽບຮຽງຂໍ້ມູລໂດຍ: ໄພທູຣຍ໌ ອິນທວົງສ໌

ສາສນາພຸທທ໌ ເປັນສາສນາປະຈຳຊາຕິລາວຂອງເຮົາ ແລ້ວມີຈັກຄົນແທ້ໆ...ທີ່ຮູ້ເຖິງປະວັຕິຂອງ "ພຣະສັມມາສັມພຸທທະເຈົ້າ" ຜູ້ຊຶ່ງເປັນ "ພຣະສາສດາ" ຂອງ "ພຣະພຸທທະສາສນາ" ມື້ນີ້ ຜຂ ຈຶ່ງຂໍນຳເອົາເຣື່ອງຣາວພຸທທະປະວັຕິ ຫຼື ປະວັຕິພຣະພຸທທະເຈົ້າ ມາໃຫ້ສຶກສາກັນໆ

ພຣະພຸທທະເຈົ້າຊຶ່ງມີພຣະນາມເດີມວ່າ "ສິທທັຕຖະ" ໝາຍເຖິງຜູ້ທີ່ສຳເຣັຈຄວາມມຸ່ງໝາຍແລ້ວ ຫຼື ຜູ້ປັຕຖນາສິ່ງໃດຍ່ອມໄດ້ສິ່ງນັ້ນ ຊຶ່ງເປັນພຣະຣາຊໂອຣົສຂອງພຣະເຈົ້າສຸທໂທທະນະ ກສັຕຣິຍ໌ຜູ້ຄອງກຸງກະບິລພັສດ໌ ແຄວ້ນສັກກະ ແລະ ພຣະນາງສິຣິມຫາມາຍາ ພຣະຣາຊທິດາຂອງກສັຕຣິຍ໌ຣາຊສກຸລໂກລິຍະວົງສ໌ແຫ່ງກຸງເທວະທະຫະ ແຄວ້ນໂກລິຍະ

ໃນຄືນທີ່ພຣະພຸທທະເຈົ້າສະເດັຈປະຕິສົນທິ[1]ໃນຄັຣພ໌[2]ພຣະນາງສິຣິມຫາມາຍາ ພຣະນາງຊຶ່ງພຣະສຸບິນ[3]ນິມິຕວ່າ ມີຊ້າງເຜືອກມີງາສາມຄູ່ໄດ້ເຂົ້າມາສູ່ພຣະຄັຣພ໌ ນະ ທີ່ບັຣທົມ[4] ກ່ອນທີ່ພຣະນາງຈະມີພຣະປະສູຕິການ[5]ທີ່ໃຕ້ຕົ້ນສາລະ ນະ ສວນລຸມພິນີວັນ ເມື່ອວັນສຸກຣ໌ ຂຶ້ນສິບຫ້າຄ່ຳ ເດືອນວິສາຂະ ປີຈໍ 80 ປີກ່ອນພຸທທະສັກຣາຊ (ປັຈຈຸບັນສວນລຸມພິນີວັນຢູ່ໃນປະເທສເນປາລ)

ທັນທີທີ່ປະສູຕິ ເຈົ້າຊາຍສິທທັຕຖະຊຶ່ງດຳເນີນດ້ວຍພຣະບາທ 7 ກ້າວ ແລະມີດອກບົວຜຸດຂຶ້ນມາຮອງຮັບພຣະບາທ ພ້ອມເປັ່ງພຣະວາຈາວ່າ ***"ເຮົາເປັນເລີສທີ່ສຸດໃນໂລກ ປະເສີຖທີ່ສຸດໃນໂລກ ການເກີດຄັ້ງນີ້ເປັນຄັ້ງສຸດທ້າຍຂອງເຮົາ"*** ແຕ່ຫລັງຈາກເຈົ້າຊາຍສິທທັຕຖະປະສູຕິການໄດ້ແລ້ວ 7 ມື້ ພຣະນາງສິຣິມຫາມາຍາກໍສະເດັຈສວັຣຄາລັຍ[6] ເຈົ້າຊາຍສິທທັຕຖະຈຶ່ງຢູ່ໃນຄວາມດູແລຂອງພຣະນາງປະຊາບໍດີໂຄຕະມີ ຊຶ່ງເປັນພຣະກະນິສຖາ[7]ຂອງພຣະນາງສິຣິມຫາມາຍາ

ທັ້ງນີ້ ພຣາຫມນ໌[8] ທັ້ງ 8 ໄດ້ທຳນາຍວ່າ ເຈົ້າຊາຍສິທທັຕຖະມີລັກສນະເປັນມຫາບຸຣຸສ ຄື ຫາກດຳຣົງຕົນໃນຄຣາວາສຈະໄດ້ເປັນຈັກກະພັດຕິ໌ ຖ້າອອກບວຊຈະໄດ້ເປັນສາສດາເອກຂອງໂລກ ແຕ່ໂກນທັນຍະ

---

[1] ປະຕິສົນທິ ແປວ່າ ເກີດຂຶ້ນໃນພົພໃໝ່ (มค. ปฏิสนฺธิ) ก. สืบต่อชาติ, เกิดขึ้นในภพใหม่, ต่อเนื่อง.

[2] ຄັຣພ໌ ແປວ່າ ທ້ອງ, ທ້ອງ, ສັຕວ໌ເກີດໃນທ້ອງໆ

[3] ສຸບິນ ແປວ່າ ຝັນ, ຄວາມຝັນ

[4] ບັຣທົມ ອ່ານວ່າ "ບັນທັມ" ແປວ່າ ນອນ

[5] ປະສູຕິການ ແປວ່າ ເວລາເກີດ

[6] ສວັຣຄາລັຍ ອ່ານວ່າ "ສະ-ຫວັນ-ຄາ-ໄລ" ແປວ່າ ຕາຍ

[7] ກະນິສຖາ ອ່ານວ່າ "ກະ-ນິດ-ຖາ" ແປວ່າ ນ້ອງ, ນ້ອງສາວ

[8] ພຣາຫມນ໌ ອ່ານວ່າ "ພາມ" ເປັນວັຣນະນຶ່ງໃນປະເທສອິນເດັຽ

ພຣາຫມນ໌ຜູ້ອາຍຸນ້ອຍທີ່ສຸດໃນຈຳນວນນັ້ນ ຢືນຢັນຫນັກແນ່ນວ່າ ພຣະຣາຊກຸມາຣສິທທັຕຖະຈະສະເດັຈອອກບວຊ ແລະຈະໄດ້ຕຣັສຣູ້ເປັນພຣະພຸທທະເຈົ້າແນ່ນອນ

ຊີວິຕໃນວັຍເດັກ

ເຈົ້າຊາຍສິທທັຕຖະຊົງສຶກສາຮ່ຳຮຽນຈົນຈົບສິລປສາສຕຣ໌ທັ້ງ 18 ສາສຕຣ໌ ໃນສຳນັກຄຣູວິສະວາມິຕຣ໌ ແລະເນື່ອງຈາກພຣະບິດາບໍ່ປະສົງຄ໌ໃຫ້ເຈົ້າຊາຍສິທທັຕຖະເປັນສາສດາເອກຂອງໂລກ ຈຶ່ງພຍາຍາມເຮັດໃຫ້ເຈົ້າຊາຍສິທທັຕຖະພົບເຫັນແຕ່ຄວາມສຸຂ ໂດຍການສ້າງປຣາສາທ 3 ລະດູ ໃຫ້ຢູ່ປະທັບ ແລະຈັດຕຽມຄວາມພ້ອມສຳຫຼັບການຣາຊາພິເສກໃຫ້ເຈົ້າຊາຍຂຶ້ນຄອງຣາຊຍ໌

ເມື່ອມີພຣະຊົນມາຍຸ 16 ພັຣສາ ຊົງອພິເສກສົມຣົສກັບພຣະນາງພິມພາ ຫຼືຍະໂສທະຣາ ພຣະທິດາຂອງພຣະເຈົ້າກຸງເທວະທະຫະຊຶ່ງເປັນພຣະຍາຕິຝ່າຍພຣະມາຣດາ ຈົນເມື່ອມີພຣະຊົນມາຍຸ 29 ພັຣສາ ພຣະນາງພິມພາໄດ້ໃຫ້ປະສູຕິພຣະຣາຊໂອຣົສ ມີພຣະນາມວ່າ "ຣາຫຸລ" ຊຶ່ງຫມາຍເຖິງ "ບ່ວງ"

ສະເດັຈອອກຜນວຊ ບວຊ ອ່ານວ່າ "ບວດ"

ວັນນຶ່ງເຈົ້າຊາຍສິທທັຕຖະຊົງເບື່ອຄວາມຈຳເຈໃນປຣາສາທ 3 ລະດູ ຈຶ່ງຊວນສາຣຖີຊົງຣົຖມ້າປະພາສອຸທຍານ ຄັ້ງນັ້ນໄດ້ທອດພຣະເນຕຣ໌ເຫັນຄົນແກ່ ຄົນເຈັບ ຄົນຕາຍ ແລະນັກບວຊ ໂດຍເທວທູຕ (ທູຕສວັຣຄ໌) ທີ່ແປລງກາຍມາ ພຣະອົງຄ໌ຈຶ່ງຊົງຄຶດໄດ້ວ່າ ນີ້ເປັນທັມມະດາຂອງໂລກ ຊີວິຕຂອງທຸກຄົນຕ້ອງຕົກຢູ່ໃນສພາພເຊັ່ນນັ້ນ ບໍ່ມີໃຜສາມາຖຫລີກລ່ຽງ **ເກີດ ແກ່ ເຈັບ ຕາຍ** ໄດ້ ຈຶ່ງຊົງເຫັນວ່າຄວາມສຸຂທາງໂລກເປັນພຽງພາພມາຍາເທົ່ານັ້ນ ແລະວິຖີທາງທີ່ຈະພົ້ນຈາກຄວາມທຸກຂ໌ ຄືຕ້ອງອອກຈາກເຮືອນເປັນສມນະ ດັ່ງນັ້ນພຣະອົງຄ໌ຈຶ່ງຢາກຈະສະເດັຈອອກບັຣພະຊາ ໃນຂນະທີ່ມີພຣະຊົນມ໌ 29 ພັຣສາ

ຍາມນັ້ນພຣະອົງຄ໌ໄດ້ສະເດັຈໄປພ້ອມກັບ **ນາຍສັນທະ** ສາຣຖີ ຊຶ່ງຕຽມມ້າພຣະທີ່ນັ່ງ ນາມວ່າ **ກັນທະກະ** ມຸ່ງຕົງໄປຍັງແມ່ນ້ຳ **ອະໂນມານະທີ** ກ່ອນຈະປະທັບນັ່ງເທິງກອງຊາຍ ຊົງຕັດພຣະເມົາລີດ້ວຍພຣະຂັຣຄ໌ ແລະປຸ່ງນຸ່ງຊຸດຜ້າກາສາວພັຕຣ໌ (ຜ້າຍ້ອມດ້ວຍຣົສຝາດແຫ່ງຕົ້ນໄມ້) ແລະໃຫ້ນາຍສັນທະນຳເຄື່ອງຊົງກັບພຣະນຄຣ[9] ກ່ອນທີ່ພຣະອົງຄ໌ຈະສະເດັຈອອກມຫາພິເນສກຣົມນ໌ (ການສະເດັຈອອກເພື່ອຄຸນອັນຍິ່ງໃຫຍ່) ໄປໂດຍພຽງລຳພັງ ເພື່ອມຸ່ງພຣະພັກຕຣ໌ໄປຍັງແຄວ້ນມຄທ[10]

---

[9] ນຄຣ ເປັນຄຳບາລີ ອ່ານວ່າ "ນະຄອນ"

[10] ມຄທ ເປັນຄຳບາລີ ອ່ານວ່າ "ມະຄະທະ ຫຼື ມະຄົດ"

ບຳເພັນຍ໌ທຸກະຣະກິຣິຍາ

ຫລັງຈາກຊົງຜນວຊແລ້ວ ພຣະອົງຄ໌ມຸ່ງໄປທີ່ແມ່ນ້ຳຄະຍາ ແຄວ້ນມຄທ ໄດ້ພຍາຍາມເສາະສະແຫວງທາງພົ້ນທຸກຂ໌ ດ້ວຍການສຶກສາຄົ້ນຄວ້າທົດລອງໃນສຳນັກ**ອາລາຣະດາບົສ** ກາລາມໂຄຕ ແລະ**ອຸທະກະດາບົສ** ຣາມະບຸຕຣ໌ ແຕ່ເມື່ອຮຽນຈົບທັ້ງ 2 ສຳນັກແລ້ວ ຊົງເຫັນວ່ານີ່ຍັງບໍ່ແມ່ນທາງພົ້ນທຸກຂ໌

ຈາກນັ້ນພຣະອົງຄ໌ໄດ້ສະເດັຈໄປທີ່ແມ່ນ້ຳເນຣັຍຊະຣາ ໃນຕຳບົລອຸຣຸເວລາ ເສນານິຄົມ ແລະຊົງບຳເພັນຍ໌ທຸກະຣະກິຣິຍາ ດ້ວຍການກັດແຂ້ວດ້ວຍແຂ້ວ ກລັ້ນຫາຍໃຈແລະອົດອາຫານ ຈົນຮ່າງກາຍຊູບຜອມ ແຕ່ຫລັງຈາກທົດລອງໄດ້ 6 ປີ ຊົງເຫັນວ່ານີ່ຍັງບໍ່ແມ່ນທາງພົ້ນທຸກຂ໌ ຈຶ່ງຊົງເລີກບຳເພັນຍ໌ທຸກະຣະກິຣິຍາ ແລະຫັນມາສັນອາຫານຕາມເດີມ ດ້ວຍພຣະຣາຊດຳຣິຕາມທີ່ ທ້າວສັກກາເທວຣາຊໄດ້ສະເດັຈລົງມາດີດພິນຖວາຍ 3 ວາຣະ ຄື ດີດພິນສາຍທີ່ 1 ຊຶ່ງໄວ້ຕຶງເກີນໄປເມື່ອດີດກໍຈະຂາດ ດີດພິນວາຣະທີ່ 2 ຊຶ່ງຂຶງໄວ້ຫຍ່ອນ ສຽງຈະຢືດຢາດຂາດຄວາມໄພເຣາະ ແລະວາຣະທີ່ 3 ດີດພິນສາຍສຸດທ້າຍທີ່ຂຶງໄວ້ພໍດີ ຈຶ່ງມີສຽງກັງວານໄພເຣາະ ດັ່ງນັ້ນຈຶ່ງຊົງພິຈາຣນາເຫັນວ່າ ທາງສາຍກາງຄືບໍ່ຕຶງເກີນໄປ ແລະບໍ່ຫຍ່ອນເກີນໄປ ນັ່ນຄືທາງທີ່ຈະນຳສູ່ການພົ້ນທຸກຂ໌

ຫລັງຈາກພຣະອົງຄ໌ເລີກບຳເພັນຍ໌ທຸກະຣະກິຣິຍາ ເຮັດໃຫ້ພຣະປັນຍ໌ຈະວັຄຄີຍ໌ທັ້ງ 5 ໄດ້ແກ່ **ໂກນທັນຍະ ວັປປະ ພັທທິຢາ ມຫານາມະ ອັສສຊິ** ທີ່ມາຄອຍຮັບໃຊ້ພຣະອົງຄ໌ດ້ວຍຄວາມຄາດຫວັງວ່າເມື່ອພຣະອົງຄ໌ຄົ້ນພົບທາງພົ້ນທຸກຂ໌ ຈະໄດ້ສອນພວກຕົນໃຫ້ບັຣລຸດ້ວຍ ເກີດເສື່ອມສັທທາທີ່ພຣະອົງຄ໌ລົ້ມເລີກຄວາມຕັ້ງໃຈ ຈຶ່ງເດີນທາງກັບໄປທີ່ປ່າອິສິປະຕະນະມະຣິຄະທາຍະວັນ ຕຳບົລສາຣະນາຖ ເມືອງພາຣານສີ

ຕຣັສຮູ້

ຍາມນັ້ນພຣະອົງຄ໌ຊົງປະທັບນັ່ງຂັດສະມາທິ ໃຕ້ຕົ້ນພຣະສຣີມະຫາໂພທິ໌ ນະ ອຸຣຸເວລາເສນານິຄົມ ເມືອງພາຣານະສີ ຫັນພຣະພັກຕຣ໌ໄປທາງທິສຕະວັນອອກ ແລະຕັ້ງຈິຕອະທິສຖານດ້ວຍຄວາມແນ່ວແນ່ວ່າຕຼາບ ໃດທີ່ຍັງບໍ່ບັຣລຸສັມມາສັມໂພທິຍານ ກໍຈະບໍ່ລຸກຂຶ້ນຈາກສະມາທິບັລລັງກ໌ ແມ້ຈະມີໝູ່ມາຣເຂົ້າມາຂັດຂວາງ ແຕ່ກໍພ່າຍແພ້ພຣະບາຣມີຂອງພຣະ ອົງຄ໌ກັບໄປ ຈົນເວລາຜ່ານໄປໃນທີ່ສຸດພຣະອົງຄ໌ຊົງບັຣລຸຣູປຊານ ຄື ຍາມນັ້ນພຣະອົງຄ໌ຊົງປະທັບນັ່ງຂັດ ສະມາທິ ໃຕ້ຕົ້ນພຣະສຣີມະຫາ ໂພທິ໌ ນະ ອຸຣຸເວລາເສນານິຄົມ ເມືອງພາຣານະສີ ຫັນພຣະພັກຕຣ໌ ໄປທາງທິສຕະວັນອອກ ແລະຕັ້ງ ຈິຕອະທິສຖານດ້ວຍຄວາມແນ່ວແນ່

ວ່າຕຼາບໃດທີ່ຍັງບໍ່ບັຣລຸ**ສັມມາສັມໂພທິຍານ** ກໍຈະບໍ່ລຸກຂຶ້ນຈາກສະມາທິບັລລັງກ໌ ແມ້ຈະມີໝູ່ມາຣເຂົ້າມາ ຂັດຂວາງ ແຕ່ກໍພ່າຍແພ້ພຣະບາຣມີຂອງພຣະອົງຄ໌ກັບໄປ ຈົນເວລາຜ່ານໄປໃນທີ່ສຸດພຣະອົງຄ໌ຊົງບັຣລຸຣູປຊານ ຄື:

ຍາມຕົ້ນ ຫຼືປຖົມຍາມ ຊົງບັຣລຸ **ປຸພເພນິວາສານຸສຕິຍານ** ຄື ສາມາຖຣະລຶກຊາຕິໄດ້

ຍາມສອງ ທາງບັຣລຸ **ຈຸຕູປປາຕຍານ** (ທິພຍະຈັກສຸຍານ) ຄື ຮູ້ເຣື່ອງການເກີດການຕາຍຂອງສັຕວ໌ທັ້ງຫລາຍວ່າເປັນໄປຕາມກັມມ໌ທີ່ ກຳຫນົດໄວ້

ຍາມສາມ ຊົງບັຣລຸ **ອາສະວັກຂະຍະຍານ** ຄື ຄວາມຮູ້ທີ່ເຮັດໃຫ້ສິ້ນອາສວະ ຫຼືກິເລສ ດ້ວຍອຣິຍະສັຈ 4 ໄດ້ແກ່ **ທຸກຂ໌ ສມຸທັຍ ນິໂຣທ** ແລະ**ມັຄຄ໌** ແລະໄດ້ຕຣັສຮູ້ດ້ວຍພຣະອົງຄ໌ເອງເປັນພຣະສັມມາສັມພຸທທະເຈົ້າ ແລະເປັນສາສດາເອກຂອງໂລກ ຊຶ່ງວັນທີ່ພຣະສັມມາສັມພຸທທະເຈົ້າຕຣັສຮູ້ ຕົງກັບວັນເພັນຍ໌ເດືອນ 6 ຂນະທີ່ **ມີພຣະຊົນມ໌ 35 ພັຣສາ**

ສະແດງປະຖົມເທສນາ

ຫລັງຈາກພຣະສັມມາສັມພຸທທະເຈົ້າຕຣັສຮູ້ແລ້ວ ຊົງພິຈາຣນາທັມມ໌ທີ່ພຣະອົງຄ໌ຕຣັສຮູ້ມາເປັນເວລາ 7 ສັປດາຫ໌ ແລະຊົງເຫັນວ່າພຣະທັມມ໌ນັ້ນຍາກຕໍ່ບຸຄຄົລທົ່ວໄປທີ່ຈະເຂົ້າໃຈແລະປຕິບັຕິໄດ້ ພຣະອົງຄ໌ຈຶ່ງຊົງພິຈາຣະນາວ່າ ບຸຄຄົລໃນໂລກນີ້ມີຫລາຍຈຳພວກຢ່າງ ບົວ 4 ເຫລົ່າ ທີ່ມີທັ້ງຜູ້ທີ່ສອນໄດ້ງ່າຍ ແລະຜູ້ທີ່ສອນໄດ້ຢາກ ພຣະອົງຄ໌ຈຶ່ງຊົງຣະລຶກເຖິງ**ອາລາຣະດາບົສ**ແລະ**ອຸທະກະດາບົສ** ຜູ້ເປັນພຣະອາຈາຣຍ໌ ຈຶ່ງຫວັງສະເດັຈໄປໂປຼດ **ແຕ່ທັ້ງສອງທ່ານເສັຽຊີວິຕແລ້ວ** ພຣະອົງຄ໌ຈຶ່ງຊົງຣະລຶກເຖິງປັນຍ໌ຈະວັຄຄີຍ໌ ທັ້ງ 5 ທີ່ເຄີຍມາເຝົ້າຮັບໃຊ້ ຈຶ່ງໄດ້ສະເດັຈໄປໂປຼດປັນຍ໌ຈະວັຄຄີຍ໌ທີ່ **ປ່າອິສິປະຕະນະມະຣຶຄະທາຍະວັນ**

ທັມມ໌ເທສນາກັນທ໌ແຮກທີ່ພຣະອົງຄ໌ຊົງສະແດງທັມມ໌ຄື **"ທັມມະຈັກກັປປະວັຕຕະນະສູຕຣ໌"** ແປລວ່າສູຕຣ໌ຂອງການຫມຸນວົງລໍ້ແຫ່ງພຣະທັມມ໌ໃຫ້ເປັນໄປ ຊຶ່ງຖືເປັນການສະແດງພຣະທັມມະເທສນາຄັ້ງທຳອິດ ໃນ **ວັນເພັນຍ໌ ຂຶ້ນ 15 ຄ່ຳ ເດືອນ 8 ຊຶ່ງຕົງກັບວັນອາສາລຫບູຊາ**

ໃນການນີ້ພຣະໂກນທັນຍະໄດ້ທັມມ໌ຈັກສຸ ຄືດວງຕາເຫັນທັມມ໌ເປັນຄົນທຳອິດ ພຣະພຸທທະອົງຄ໌ຈຶ່ງຊົງເປັ່ງວາຈາວ່າ **"ອັນຍາສິ ວະຕະໂກນທັນໂຍ"** ແປລວ່າ **ໂກນທັນຍະໄດ້ຮູ້ແລ້ວ** ທ່ານໂກນທັນຍະ ຈຶ່ງໄດ້ສົມຍາວ່າ **ອັນຍາໂກນທັນຍະ** ແລະໄດ້ຮັບການບວຊເປັນພຣະສົງຄ໌ອົງຄ໌ແຮກໃນພຣະພຸທທະສາສນາ ໂດຍເອີ້ນການບວຊທີ່ພຣະພຸທທະເຈົ້າບວຊໃຫ້ວ່າ **"ເອຫິພິກຂຸອຸປະສັມປະທາ"**

ຫລັງຈາກປັນຍ໌ຈະວັຄຄີຍ໌ອຸປສົມບົທທັ້ງຫມົດແລ້ວ ພຸທທະອົງຄ໌ຈຶ່ງຊົງເທສນ໌ **ອະນັຕຕະລັກຂະນະສູຕຣ໌** ປັນຍ໌ຈະວັຄຄີຍ໌ຈຶ່ງສຳເຣັຈເປັນອຣຫັນຕ໌ໃນເວລາຕໍ່ມາ

ການເຜີຍແຜ່ພຣະພຸທທະສາສນາ

ຕໍ່ມາພຣະພຸທທະເຈົ້າໄດ້ເທສນ໌ພຣະທັມມະເທສນາໂປຼດແກ່ຍະສະກຸລບຸຕຣ໌ ຣວມທັ້ງເພື່ອນຂອງຍະສະກຸລບຸຕຣ໌ ຈົນໄດ້ສຳເຣັຈເປັນພຣະອຣຫັນຕ໌ທັ້ງຫມົດ ຣວມ 60 ຮູປ

ພຣະພຸທທະເຈົ້າຊົງມີພຣະຣາຊປະສົງຄ໌ຈະໃຫ້ມນຸສຍ໌ໂລກພົ້ນທຸກຂ໌ ພົ້ນກິເລສ ຈຶ່ງຕຣັສເອີ້ນສາວົກທັ້ງ 60 ຮູປ ມາປະຊຸມກັນ ແລະຕຣັສໃຫ້ພຣະສາວົກ 60 ຮູປ ຈາຣິກແຍກຍ້າຍກັນເດີນທາງໄປປະກາສສາສນາ 60 ແຫ່ງ ໂດຍລຳພັງ ໃນເສັ້ນທາງທີ່ບໍ່ຊ້ຳກັນ ເພື່ອໃຫ້ສາມາຖເຜີຍແຜ່ພຣະພຸທທະສາສນາໄດ້ໃນຫລາຍພື້ນທີ່ຢ່າງຖົ່ວເຖິງ ສ່ວນພຣະອົງຄ໌ເອງໄດ້ສະເດັຈໄປສະແດງທັມມ໌ ນະ ຕຳບົລອຸຣຸເວລາ ເສນານິຄົມ

ຫລັງຈາກສາວົກໄດ້ເດີນທາງໄປເຜີຍແຜ່ພຣະພຸທທະສາສນາໃນພື້ນທີ່ຕ່າງໆ ເຮັດໃຫ້ມີຜູ້ເລື່ອມໃສພຣະພທຸທະສາສນາເປັນຈຳນວນຫຼາຍ ພຣະອົງຄ໌ຈຶ່ງຊົງອນຸຍາຕໃຫ້ສາວົກສາມາຖດຳເນີນການບວຊໄດ້ ໂດຍໃຊ້

ວິທີການ **"ຕິສະຣະນະຄະມະນູປະສັມປະທາ"** ຄື ການປະຕິຍານຕົນເປັນຜູ້ເຖິງພຣະຣັຕນຕຣັຍ ພຣະພຸທທະສາສ ນາຈຶ່ງຫຍັ່ງຮາກຝັງເລິກແລະແພຣ່ຫລາຍໃນດິນແດນແຫ່ງນັ້ນເປັນຕົ້ນມາ

ສະເດັຈດັບຂັນທ໌ປຣິນິພພານ

ພຣະສັມມາສັມພຸທທະເຈົ້າໄດ້ສະເດັຈໂປຼດສັຕວ໌ແລະສະແດງພຣະທັມມະເທສນາ ຕລອດຣະຍະເວລາ 45 ພັຣສາ ຊົງສດັບວ່າ ອີກ 3 ເດືອນຂ້າງໜ້າຈະປຣິນິພພານ ຈຶ່ງໄດ້ຊົງປລົງອາຍຸສັງຂາຣ ຂນະນັ້ນພຣະອົງຄ໌ໄດ້ປະທັບຈຳພັຣສາ ນະ **ເວລຸຄາມ** ໃກລ້ເມືອງເວລາສີ ແຄວ້ນວັຊຊີ ໂດຍກ່ອນສະເດັຈດັບຂັນທ໌ປຣິນິພພານ 1 ມື້ ພຣະອົງຄ໌ໄດ້ສະເຫວີຍສຸກຣມັທທວະທີ່ນາຍຈຸນທະເຮັດມາຖວາຍ ແຕ່ເກີດອາພາທລົງ ເຮັດໃຫ້ພຣະອານົນທ໌ໂກຣທ ແຕ່ພຣະອົງຄ໌ຕຣັສວ່າ "ບິນທະບາຕທີ່ມີອານິສົງສ໌ທີ່ສຸດ ມີ 2 ປະການ ຄື ເມື່ອຕະຖາຄົຕ (ພຸທທະອົງຄ໌) ສະເຫວີຍບິນທະບາຕແລ້ວຕຣັສຮູ້ ແລະປຣິນິພພານ" ແລະມີພຣະດຳຣັສວ່າ **"โย โว อานนฺท ธมฺม จ วินโย มยา เทสิโต ปญฺญตฺโต โส โว มมจฺจเยน สตฺถา"** ອັນແປລວ່າ....

........*"ດູກ່ອນອານົນທ໌ ທັມມ໌ແລະວິນັຍອັນທີ່ເຮົາສະແດງແລ້ວ ບັນຍັຕິແລ້ວແກ່ທ່ານທັ້ງຫລາຍ ທັມມ໌ວິນັຍນັ້ນຈັກເປັນສາສດາຂອງທ່ານທັ້ງຫລາຍ ເມື່ອເຮົາລ່ວງລັບໄປແລ້ວ"*

ພຣະພຸທທະເຈົ້າຊົງປະຊວຣໜັກ ແຕ່ຊົງອົດກລັ້ນມຸ່ງໜ້າໄປຍັງເມືອງ**ກຸສິນາຣາ** ປະທັບ ນະ ປ່າສາລະ ເພື່ອສະເດັຈດັບຂັນທ໌ປຣິນິພພານ ໂດຍກ່ອນທີ່ຈະສະເດັຈດັບຂັນທ໌ປຣິນິພພານນັ້ນ ພຣະອົງຄ໌ໄດ້ອຸປສົມບົທ

ແກ່ພຣະສຸພັທທະປະຣິພາຊົກ ຊຶ່ງຖືໄດ້ວ່າ **"ພຣະສຸພພັທທະ"** ຄືສາວົກອົງຄ໌ສຸດທ້າຍທີ່ພຣະພຸທທະອົງຄ໌ຊົງບວຊໃຫ້ ໃນທ່າມກາງຄນະສົງຄ໌ທັ້ງທີ່ເປັນພຣະອຣຫັນຕ໌ ແລະປຸຖຸຊົນຈາກແຄວ້ນຕ່າງໆ ຮວມທັ້ງເທວດາ ທີ່ມາຮວມຕົວກັນໃນມື້ນີ້

ໃນຍາມນັ້ນພຣະອົງຄ໌ຊົງມີປັຈສິມໂອວາທວ່າ **"ດູກ່ອນພິກສຸທັ້ງຫລາຍ ເຮົາຂໍບອກທ່ານທັ້ງຫລາຍສັງຂາຣທັ້ງປວງມີຄວາມເສື່ອມສລາຍໄປເປັນທັມມະດາ ພວກທ່ານຈົ່ງທຳປະໂຍຊນ໌ຕົນເອງ ແລະປະໂຍຊນ໌ຂອງຜູ້ອື່ນໃຫ້ສົມບູຣນ໌ດ້ວຍຄວາມບໍ່ປະມາທເຖີດ"**

ຈາກນັ້ນໄດ້ສະເດັຈດັບຂັນທ໌ປຣິນິພພານ ໃຕ້ຕົ້ນສາລະ ນະ **ສາລະວະໂນທະຍານ** ຂອງເຫລົ່າມັລລະກະສັຕຣິຍ໌ ເມືອງກຸສິນາຣາ ແຄວ້ນມັລລະ ໃນວັນຂຶ້ນ 15 ຄ່ຳ ເດືອນ 6 ຮວມພຣະຊົນມ໌ 80 ພັຣສາ ແລະມື້ນີ້ຖືເປັນການເຣີ່ມຕົ້ນຂອງພຸທທະສັກຣາຊ

ຫາກຕອນການສຶກສາລະອຽດເພີ່ມຂຶ້ນກົດບ່ອນນີ້ ຫຼື ເບິ່ງວິດີໂອປະກອບບ່ອນນີ້